ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 001 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 02 ມັງກອນ 2018

ສຳນັກງານ ຄຄຊ
ເລກທີ 0006
ວັນທີ 03 JAN 2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈຳອາທິດທີ 11-15/12/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,50% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນຍອດຜົນຜະລິດຂອງພາກສ່ວນອຸດສາຫະກຳ ເພີ່ມຂຶ້ນ 0,2% ຂອງເດືອນ 11/2017 ຈາກເພີ່ມຂຶ້ນ 1,2% ໃນເດືອນຜ່ານມາ ແລະ ຕົວເລກດັດຊະນີລາຄາຜູ້ບໍລິໂພກ ເພີ່ມຂຶ້ນ 2,2% ຂອງເດືອນ 11/2017 ຈາກເພີ່ມຂຶ້ນ 2,0% ໃນປີຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 04-08/12/2017 | ອາທິດນີ້ 11-15/12/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1736 | 1,1795 | -0,50% |
| ເຢນ/ໂດລາ | 113,54 | 112,14 | 1,25% |
| ບາດ/ໂດລາ | 32,65 | 32,50 | 0,46% |
| ເປໂຊ/ໂດລາ | 50,54 | 50,44 | 0,21% |
| ຣູເປັຍ/ໂດລາ | 13.545 | 13.577 | -0,24% |
| ໂດລາສິງກະໂປ/ໂດລາ | 1,3533 | 1,3463 | 0,52% |
| ຢວນ/ໂດລາ | 6,6162 | 6,6073 | 0,13% |

#### 1.2 ສະພາບລາຄານ້ຳມັນ ແລະຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ເພີ່ມຂຶ້ນ 0,58% ຈາກ 56,89 ໂດລາ/ບາເຣວ ມາເປັນ 57,22 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງສະຫະລັດອາເມລິກາ ຫຼຸດລົງ 5,12 ລ້ານບາເຣວ ຂອງອາທິດທີ 08/12/2017 ຈາກຫຼຸດລົງ 5,61 ລ້ານບາເຣວ ໃນອາທິດຜ່ານມາ;

- ສຳລັບລາຄາຄຳ ເພີ່ມຂຶ້ນ 0,88% ຈາກ 1.245,98 ໂດລາ/ອອນ ມາເປັນ 1.256,96 ໂດລາ/ອອນ ເນື່ອງຈາກການອ່ອນຄ່າຂອງເງິນໂດລາ ເຮັດໃຫ້ນັກລົງທຶນຫຼຸດຜ່ອນການຖືຄອງເງິນໂດລາ, ແລ້ວຫັນເຂົ້າມາຊື້ຄຳ ແລະ ສັນຍາຊື້-ຂາຍຄຳເພີ່ມຂຶ້ນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,06% ແຕ່ອ່ອນຄ່າລົງ 0,40% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າຂຶ້ນ 0,28% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 8,75% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 04-08/12/2017 | | | ອາທິດນີ້ 11-15/12/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.305,05 | 8.332,98 | 8.317,23 | 8.300,99 | 8.326,65 | 8.312,62 | 0,05% | 0,08% | 0,06% | 0,19% | 0,33% | 0,28% |
| ບາດ | 255,01 | 256,63 | 256,04 | 255,86 | 257,64 | 257,07 | -0,33% | -0,39% | -0,40% | -8,70% | -8,75% | -8,75% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນM2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 4,06% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 16,83%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,97% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 13,90%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (08-14/12/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 7,88 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 43,93 ລ້ານໂດລາ ແລະ ຂາຍໂດລາໄດ້ 36,05 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 439,35 ລ້ານບາດ (ໃນນີ້ຊື້ບາດໄດ້ 163,59 ລ້ານບາດ ແລະ ຂາຍບາດໄດ້ 602,94 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາ ເພີ່ມຂຶ້ນ 75,24% ແລະ ເງິນບາດ ເພີ່ມຂຶ້ນ 54,94%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດຈຳນວນ 3,18 ລ້ານໂດລາ ແຕ່ເງິນບາດ ບໍ່ມີການຊື້-ຂາຍ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 116,10 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 3,67 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆໃນອາທິດນີ້ ເຫັນວ່າ: ທຫລ ມີການຊື້-ຂາຍເງິນໂດລາ ຈຳນວນ 68,14 ລ້ານໂດລາ ແຕ່ເງິນບາດ ແມ່ນບໍ່ມີການຊື້-ຂາຍ.

---

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 01-07/12/2017 | | ອາທິດນີ້ 08-14/12/2017 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **28,96** | **139,01** | **43,93** | **163,59** | **51,69%** | **17,68%** |
| - ທ/ຄ ທຸລະກິດລັດ | 11,41 | 47,80 | 16,27 | 91,49 | 42,59% | 91,40% |
| - ທ/ຄ ທຸລະກິດອື່ນໆ | 17,55 | 91,21 | 27,66 | 72,10 | 57,61% | -20,95% |
| **2. ການຂາຍເງິນຕາຕ່າງປະເທດ** | **16,68** | **355,71** | **36,05** | **602,94** | **116,13%** | **69,50%** |
| - ທ/ຄ ທຸລະກິດລັດ | 7,76 | 80,92 | 16,77 | 151,16 | 116,11% | 86,80% |
| - ທ/ຄ ທຸລະກິດອື່ນໆ | 8,92 | 274,79 | 19,28 | 451,78 | 116,14% | 64,41% |
| **ຊື້-ຂາຍສຸດທິ ທທກ** | **12,28** | **-216,70** | **7,88** | **-439,35** | **-35,83%** | **102,75%** |
| - ຜິດດ່ຽງຊື້-ຂາຍ | 42,40% | -155,89% | 17,94% | -268,57% | -57,69% | 72,28% |
| - ມູນຄ່າການຊື້-ຂາຍ | **45,64** | **494,72** | **79,98** | **766,53** | **75,24%** | **54,94%** |
| **3.ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-2,00** | **0,00** | **-3,18** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 2,00 | 0,00 | 3,18 | 0,00 | | |
| **4.ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **0,72** | **30,00** | **116,10** | **3,67** | | |
| **5.ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **68,14** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 68,14 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 12/2017 ຄາດວ່າຈະຢູ່ໃນລະດັບ 0,33% (ຕົວເລກຄາດຄະເນ).

## 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ ເພີ່ມຂຶ້ນ 542,4% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 62,95 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 102,2% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 91,81 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງສປປລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 1.506 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 804 ສະບັບ ເທົ່າກັບ 114,52% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 556,25 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 323,02 ຕື້ກີບ ເທົ່າກັບ 138,49% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (08-14/12/2017) ມີທັງໝົດ 4.119 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.739 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ 1.705,15 ຕື້ກີບ ຈາກ 425 ຕື້ກີບ ມາເປັນ 2.130,15 ຕື້ກີບ ເທົ່າກັບ 401,21%;
- ກະຊວງການເງິນ: ມີການເຄື່ອນໄຫວຈານວນ 380 ຄັ້ງ, ມູນຄ່າການໂອນ 476,51 ຕື້ກີບ.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 996,51 ຈຸດ ຫຼຸດລົງ 1,74% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 102.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 435,79 ລ້ານກວ່າກີບ ຫຼຸດລົງ 51,22% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 50,08% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 04-08/12/2017 | ດັດຊະນີອາທິດທີ 11-15/12/2017 | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.014,14 | 996,51 | -1,74 | |

**ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ(LSX)** (ຫົວໜ່ວຍມູນຄ່າ 1.000ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | **61.400** | **336.590.000** | **5.482** | **3.500** | **19.970.000** | **5.706** | -94,30 | -94,07 | 224 |
| ບໍລິສັດຜະລິດໄຟຟ້າລາວມະຫາຊົນ | **114.400** | **551.170.000** | **4.818** | **90.200** | **399.540.000** | **4.429** | -21,15 | -27,51 | -388 |
| ບໍລິສັດລາວເວີນມະຫາຊົນ | **100** | **460.000** | **4.600** | **-** | **-** | **3.500** | -100 | -100 | -1.100 |
| ບໍລິສັດປີໂຕລ້ຽມເທລດດິ້ງລາວມະຫາຊົນ | - | - | **2.200** | **3.600** | **7.560.000** | **2.100** | - | - | -100 |
| ບໍລິສັດສູວັນນີໂຮມເຊັນເຕີມະຫາຊົນ | - | - | **2.950** | **100** | **295.000** | **2.950** | - | - | - |
| ບໍລິສັດພູສີກໍ່ສ້າງມະຫາຊົນ | **2.900** | **5.080.000** | **1.752** | **5.100** | **8.425.000** | **1.652** | 75,86 | 65,85 | -100 |
| ທັງໝົດ | **178.800** | **893.300.000** | | **102.500** | **435.790.000** | | -42,67 | -51,22 | |

## 3. ວຽກງານອື່ນໆທີ່ພົ້ນເດັ່ນ.

- **ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ III ປະຈຳປີ 2017 ທີ່ (ທຫລ); ❷ ກອງປະຊຸມຜ່ານຮ່າງແຜນສ້າງຄວາມເຂັ້ມແຂງວຽກງານປະຊາສຶກສາທາງດ້ານການເງິນແຫ່ງຊາດ ທີ່ (ທຫລ); ❸ ກອງປະຊຸມຜົນການປຶກສາຫາລື ກັບກອງທຶນການເງິນສາກົນ ທີ່ (ທຫລ); ❹ ກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍສິນທິສັນຍາ ແລະ ສັນຍາສາກົນ ທີ່ (ສູນ ITCT ຫຼັກ 5) ແລະ ❺ ສຳມະນາລະບົບຊຳລະ ກັບບໍລິສັດ Visa ທີ່ (ໂຮງແຮມ ລາວພຣາຊາ);
- ທ່ານ ຮອງຜູ້ວ່າການ ທຫລ ເດີນທາງເຂົ້າຮ່ວມກອງປະຊຸມລະດັບຮອງລັດຖະມົນຕີກະຊວງການເງິນ ແລະ ຮອງຜູ້ວ່າການ ທຫລ ອາຊຽນ +3 ທີ່ (ປະເທດຍີ່ປຸ່ນ);

- ສຳເລັດຕ້ອນຮັບແຂກເຂົ້າຢ້ຽມຂໍ່ານັບ ທ່ານ ຜູ້ວ່າການ ທຫລ ຂອງທ່ານ ນ. Edna Villa, ຮອງຫົວໜ້າກຸ່ມ SEAVG ແລະ ຄະນະປະເມີນຜົນເສດຖະກິດມະຫາພາກຕາມມາດຕາ IV ຂອງກອງທຶນການເງິນສາກົນ.

**III. ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ; ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ.

- **ກະກຽມເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆ:** ❶ ກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງກອງທຶນປົກປ້ອງຜູ້ຝາກເງິນ ປະຈຳປີ 2017 ແລະ ພິທີມອບໃບຢັ້ງຢືນການເຂົ້າເປັນສະມາຊິກຂອງ ກອງທຶນປົກປ້ອງຜູ້ຝາກງານ ທີ່ (ໂຮງແຮມລ້ານຊ້າງ); ❷ ກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງໂຮງພິມທະນາບັດ ທຫລ ປະຈຳປີ 2017 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2018 ແລະ ພິທີມອບໃບຍ້ອງຍໍ ແລະ ໃບຊົມເຊີຍຜົນງານປະຈຳປີ 2017 ທີ່ (ໂຮງພິມ ທຫລ); ❸ ກອງປະຊຸມປຶກສາຫາລືກ່ຽວກັບການຂາຍຮຸ້ນຂອງຜູ້ຖືຮຸ້ນເດີມໃຫ້ແກ່ມວນຊົນທົ່ວໄປ ຂອງບໍລິສັດ ລັດວິສາຫະກິດ ລາວໂທລະຄົມ ທີ່ (ສຄຄຊ); ❹ ກອງປະຊຸມຖອດຖອນບົດຮຽນ ແລະ ຕິດຕາມອົງກອນບໍລິຫານການເງິນຈຸລະພາກ ທີ່ (ແຂວງວຽງຈັນ) ແລະ ❺ ກອງປະຊຸມຮ່ວມຊີວິດທົ່ວສະຖາບັນການທະນາຄານ ທີ່ (ສທດ);

- ທ່ານ ຜູ້ວ່າການ ທຫລ ພ້ອມດ້ວຍຄະນະສືບຕໍ່ກະກຽມເດີນທາງໄປເຄື່ອນໄຫວວຽກທາງລັດຖະການ ຢູ່ແຂວງຈຳປາສັກ, ເຊກອງ, ສາລະວັນ ແລະ ອັດຕະປື;

- ທ່ານ ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະສືບຕໍ່ກະກຽມເດີນທາງໄປເຄື່ອນໄຫວວຽກທາງລັດຖະການ ຢູ່ແຂວງຜົ້ງສາລີ, ອຸດົມໄຊ, ບໍ່ແກ້ວ, ຫຼວງນ້ຳທາ, ຫຼວງພະບາງ ແລະ ໄຊຍະບູລີ.

ຫົວໜ້າຫ້ອງການ

ພົດສະຖາພອນ ແກ້ວວົງວິຈິດ